## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 1 ຕຸລາ 2023 (10-1-2023)

---

**ສາລະພາບໝົດດວງໃຈ**

**ຈຸດສຳຄັນໃນບົດຮຽນ:** ການສາລະພາບແລະການຖິ້ມໃຈເກົ່າເອົາໃຈໃໝ່ເຮັດໃຫ້ພວກເຮົາຢູ່ໃກ້ພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

*ບ່ອນໃດທີ່ທ່ານມັກລີ້ຕົວຢູ່ ເພື່ອບໍ່ໃຫ້ໃຜຮູ້?*

ທ່ານເຄີຍພະຍາຍາມທາສີຫ້ອງພຽງແຕ່ໜຶ່ງດຽວຈັກເທື່ອບໍ່? ຫຼາຍປີຜ່ານມາ, ເຈົ້າສາວທີ່ຮັກຂອງຂ້າພະເຈົ້າໄດ້ຕັດສິນໃຈວ່າພວກເຮົາສົມຄວນຍ້າຍຮູບໃນຫ້ອງຮັບແຂກ. ເມື່ອຂ້າພະເຈົ້າໄດ້ເອົາຮູບເກົ່າອອກ, ຝາທາງຫຼັງຮູບມີສີທີ່ຕ່າງກັນ. ບໍ່ມີບັນຫາ, ຂ້າພະເຈົ້າກໍພຽງແຕ່ທາສີຈຸດນັ້ນກໍພໍແລ້ວ. ບໍ່ດອກ. ບໍ່ເຂົ້າທ່າ. ສີທີ່ທາແປະໃສ່ເບິ່ງຈະແຈ້ງກວ່າ. ຂ້າພະເຈົ້າຈຳເປັນຕ້ອງທາສີໝົດຝາເຮືອນ. ຈາກນັ້ນນາງໄດ້ໃຫ້ຄວາມຄິດເຫັນວ່າເຮົາຈະທາສີໝົດຝາເຮືອນຢູ່ແລ້ວ, ບາງທີ "ເຮົາ" ສາມາດຍ້າຍຖ້ງລັ້ງງປາອອກຈາກຝານັ້ນໄປໄວ້ທີ່ຫ້ອງພັກຜ່ອນນ້ອຍນັ້ນ. ບໍ່ເປັນຫຍັງ. ນາງຢາກຍົກຍ້າຍຫ້ອງກິນເຂົ້າໄປໃສ່ບ່ອນທີ່ຫ້ອງພັກຜ່ອນນ້ອຍເຄີຍຢູ່ນັ້ນ. ໝົດທຸກຢ່າງທີ່ຂ້າພະເຈົ້າຈຳເປັນຕ້ອງເຮັດແມ່ນເອົາບັນດາປຶ້ມທັງຫຼາຍໄປໄວ້ທີ່ໂບດ. ຫຼັງຈາກນັ້ນພວກເຮົາກໍສາມາດຍ້າຍຫ້ອງພັກຜ່ອນນ້ອຍເກົ່ານັ້ນໃຫ້ເປັນຫ້ອງການປັດຈຸບັນຂອງຂ້າພະເຈົ້າ. ຫ້ອງພັກຜ່ອນນ້ອຍສາມາດປ່ຽນມາເປັນຫ້ອງກິນເຂົ້າ. **ສຸດຍອດ!**

ຄຳປຶກສາຂອງຂ້າພະເຈົ້າຕລອດຫຼາຍປີຜ່ານມາແມ່ນ "ສວນຊີວິດແຕ່ງງານຂອງທ່ານ. ໂຍນສີເກົ່າຖິ້ມ!" ດານີເອນໄດ້ສົມທຽບລະຫວ່າງຄວາມຍິ່ງໃຫຍ່ຂອງພຣະເຈົ້າພ້ອມດ້ວຍຄວາມຢຳເກງພຣະອົງ ແລະຄວາມບາບອັນຊົ່ວຮ້າຍຂອງມະນຸດ. ຜົນຮັບແມ່ນຄຳອ້ອນວອນທີ່ມີອຳນາດສຳລັບການຊົງໃຫ້ອະພັຍແລະການຟື້ນຟູສ້າງຂຶ້ນໃໝ່.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**ການສຶກສາພຣະຄັມພີ**

### 1. ດານີເອນ 9:3-6

*3ຂ້າພະເຈົ້າໄດ້ອ້ອນວອນດ້ວຍໃຈຮ້ອນຮົນຕໍ່ພຣະຜູ້ເປັນເຈົ້າ ໄດ້ຮ້ອງຂໍຕໍ່ພຣະອົງ ໄດ້ອົດອາຫານ ໄດ້ນຸ່ງເຄື່ອງໄວ້ທຸກແລະນັ່ງໃນຂີ້-*
*ເທົ່າໄຟ. 4ຂ້າພະເຈົ້າໄດ້ອ້ອນວອນຕໍ່ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ ແລະຍອມຮັບສາລະພາບສິ່ງທີ່ຊົນຊາດຂອງຂ້າພະເຈົ້າໄດ້ເຮັດ*
*ບາບວ່າ: ຂ້າແດ່ພຣະຜູ້ເປັນເຈົ້າພຣະອົງຊົງຍິ່ງໃຫຍ່ແລະໜ້າຢຳເກງ ຊົງເຮັດຕາມຄຳໝັ້ນ ສັນຍາຂອງພຣະອົງ ຊົງສະແດງຄວາມຮັກ*
*ໝັ້ນຄົງຕໍ່ຄົນທັງຫລາຍທີ່ຈົງຮັກພັກດີຕໍ່ພຣະອົງ ແລະທີ່ປະຕິບັດຕາມຄຳສັ່ງຂອງພຣະອົງ. 5ພວກຂ້ານ້ອຍໄດ້ເຮັດບາບໄດ້ເຮັດຊົ່ວແລະ*
*ເຮັດບາບບໍ່ໄດ້ເຮັດສິ່ງທີ່ພຣະອົງຊົງສັ່ງໃຫ້ເຮັດ ແລະໄດ້ປະຕິເສດສິ່ງທີ່ພຣະອົງຊົງບອກວ່າຖືກຕ້ອງ. 6ພວກຂ້ານ້ອຍບໍ່ເຄີຍເຊື່ອຟັງ*
*ພວກຜູ້ປະກາດພຣະທັມຂອງພຣະອົງຄືຜູ້ເວົ້າໃນພຣະນາມຂອງພຣະອົງຕໍ່ພວກກະສັດພວກປົກຄອງພວກບັນພະບູລຸດຂອງພວກຂ້າ-*
*ນ້ອຍແລະຕໍ່ຊົນຊາດທັງໝົດ.*

ດານີເອນ ມີເວລາຫຼາຍທີ່ຈະຄິດ. ລາວໄດ້ອາສັຍຢູ່ທີ່ນະຄອນບາບີໂລນຫຼາຍກວ່າຫົກສິບຫ້າປີ. ລາວໄດ້ຖືກເວົ້າເຖິງຢູ່ໃນການປ່າວປະກາດຂອງຜູ້ທຳນວາຍ ເຢເຣມີຢາ ວ່າປະຊາກອນຂອງພຣະເຈົ້າຈະອາສັຍຢູ່ພາຍໃຕ້ການເປັນຊະເລີຍຂອງບາບີໂລນເປັນເວລາເຈັດສິບຫ້າປີ (ຢຣມ 25:8-14; 29:10). ວາລະສຸດທ້າຍຂອງປີເຫຼົ່ານັ້ນໄດ້ຫຍັບໃກ້ເຂົ້າມາ. ເລີ້ມດ້ວຍຄຳວ່າ "ດັ່ງນັ້ນ" ໃນພຣະຄັມພີດາ

ນີເອນ ບົດທີ່ 9:3 ຕັ້ງຄຳຖາມວ່າ ເປັນຫຍັງການໄຕ່ຕອງຖ້ອຍຄຳຂອງຄຳພະຍາກອນຂອງເຢເຣມີຢາຈຶ່ງເຮັດໃຫ້ດານີເອນຕອບສນອງ ແລະສແວງຫາພຣະເຈົ້າດ້ວຍການກະທຳທີ່ກ່ຽວຂ້ອງກັບການຖິ້ມໃຈເກົ່າເອົາໃຈໃໝ່, ຄວາມໂສກເສົ້າເສັ່ງໃຈ, ແລະການດູໝິ່ນຕົວເອງ.

- ບາງທີດານີເອນໄດ້ຖືກອົກທັກໃນຂະນະທີ່ລາວຈື່ໄດ້ວິທີທີ່ເຢເຣມີຢາໄດ້ເວົ້າເຖິງການຕັດສິນຂອງພຣະເຈົ້າ (ຢຣມ 4:18-22).
- ບາງທີລາວຈົດຈຳໄດ້ວ່າບັນດາຊາວຢິວໄດ້ກະບົດຕໍ່ຕ້ານ ແລະບໍ່ເຊື່ອຟັງພຣະເຈົ້າ (1 ກສ 9:7-9).
- ບາງທີດານີເອນ ໄດ້ເຫັນຄວາມສຳເລັດຂອງການຊົງທຳນວາຍຂອງພຣະເຈົ້າເປັນການເຕືອນໃຈເຖິງຄວາມບໍຣິສຸດແລະຄວາມໜ້າເຊື່ອຖືຂອງພຣະອົງ. ເໝືອນດັ່ງສິ່ງທີ່ໄດ້ເກີດຂຶ້ນລະຫວ່າງການນິມິດໝາຍຂອງຜູ້ທຳນວາຍເອຊາຢາ, ການຖືກເຕືອນໃຈຂອງຄວາມບໍຣິສຸດຂອງພຣະເຈົ້າອາດຈະເນັ້ນຄວາມຮູ້ສຶກທີ່ບໍ່ສະອາດຂອງດານີເອນ (ອຊຢ 6:1-5). ທາງເລືອກສຸດທ້າຍເບິ່ງຄືວ່າເປັນໄປໄດ້ຫຼາຍທີ່ສຸດທີ່ດານີເອນໄດ້ເລີ້ມປະກາດວ່າພຣະຜູ້ເປັນເຈົ້າຊົງຍິ່ງໃຫຍ່ແລະເປັນການດົນໃຈທີ່ໜ້າຢ້ານກົວ, ແລະຫຼັງຈາກນັ້ນລາວໄດ້ໂຕ້ຕອບທັນທີທັນໃດດ້ວຍການສາລະພາບບາບ, ການເຮັດຜິດ, ແລະການກະບົດ.

ບໍ່ວ່າລາວມີແຮງຈູງໃຈອັນໃດກໍຕາມ, ດານີເອນໄດ້ຕັ້ງໃຈທີ່ຈະສົນທະນາກັບພຣະເຈົ້າອົງຊົງຣິດອຳນາດຍິ່ງໃຫຍ່. ດັ່ງນັ້ນ, ດານີເອນຈຶ່ງ "ປັບ" ຄວາມສົນໃຈຂອງລາວໄປໃສ່ພຣະເຈົ້າ, ຄຳກິລິຍາພາສາເຮັບເຣີທີ່ແປວ່າ "ຫັນໜ້າໄປທາງ" ຢ່າງແທ້ຈິງ. ຄຳສັບດັ່ງກ່າວອາດຈະຊີ້ບອກວ່າ ດານີເອນໄດ້ໝອບໜ້າລົງສູ່ພື້ນດິນໃນການອະທິຖານ. ດ້ວຍສຸດຈິດສຸດໃຈ, ດານີເອນໄດ້ຮ້ອງໄຫ້ຕໍ່ພຣະເຈົ້າ, ຕັ້ງໃຈທີ່ຈະເວົ້າແລະໄດ້ຍິນສິ່ງທີ່ພຣະຜູ້ເປັນເຈົ້າຈະຊົງກ່າວ. <u>ຄຳອ້ອນວອນອະທິຖານຂອງລາວແມ່ນຍືດຍາວທີ່ສຸດໃນພຣະຄັມພີ</u>.

ພຣະຄັມພີສະແດງໃຫ້ເຫັນວ່າດານີເອນເປັນຄົນດີແລະນັບຖືພຣະເຈົ້າ. ລາວດຳເນີນຊີວິດດ້ວຍຄວາມສັດຊື່. ເວົ້າເຖິງບັນດາຜູ້ທີ່ໄດ້ດຳເນີນຊີວິດດ້ວຍຄວາມຖືກຕ້ອງ, ຜູ້ທຳນວາຍ ເອເຊກຽນ ໄດ້ຈັດໃຫ້ດານີເອນຢູ່ໃນຈຳພວກດຽວກັນກັບໂນອາແລະໂຢບ, ສອງຄົນທີ່ໄດ້ສະແດງຄວາມສັດຊື່ຢ່າງບໍ່ມີບ່ອນຕິ ແລະຄວາມເຊື່ອບໍ່ຫວັ່ນໄຫວປ່ຽນແປງ (ອຊກ 14:14, 20). ຕື່ມອີກ, ພຣະຄັມພີເຮັບເຣີອ້າງອີງເຖິງດານີເອນໃນການເອີ້ນເຄື່ອງມືຂອງບັນດາຜູ້ທີ່ໄດ້ສະແດງໃຫ້ເຫັນຄວາມເຊື່ອທີ່ຍິ່ງໃຫຍ່ (ຮຣ 11:32-33). ດານີເອນໄດ້ສາລະພາບແລະກັບໃຈໃໝ່ສຳລັບຄວາມບາບຂອງຕົນເອງແລະຄວາມບາບຂອງຊາດ. ການຖິ້ມໃຈເກົ່າເອົາໃຈໃໝ່ນັ້ນແມ່ນຫຍັງ?
<u>ການຖິ້ມໃຈເກົ່າເອົາໃຈໃໝ່ແມ່ນການປ່ຽນແປງຈິດໃຈຊຶ່ງນຳໄປສູ່ການປ່ຽນແປງຂອງການປະຕິບັດ.</u>

*ເປັນຫຍັງການສາລະພາບບາບຈຶ່ງສຳຄັນຫຼາຍໃນການດຳເນີນຊີວິດຂອງພວກເຮົາ?*

## 2. <u>ດານີເອນ 9:7-10</u>

*7ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຊອບທັມສະເໝີພວກຂ້ານ້ອຍທັງປວງພ້ອມທັງປະຊາຊົນຜູ້ຢູ່ໃນແຂວງຢູດາໃນນະຄອນເຢຣູຊາເລັມ*
*ແລະຊາວອິສຣາເອນທີ່ພຣະອົງຊົງເຮັດໃຫ້ພວກເຂົາແຕກໄປຢູ່ໃນປະເທດໃກ້ແລະໄກຍ້ອນພວກເຂົາບໍ່ເຊື່ອຟັງພຣະອົງນັ້ນໄດ້ເຮັດສິ່ງທີ່*
*ໜ້າອັບອາຍສເມີ. 8ຂ້າແດ່ພຣະຜູ້ເປັນເຈົ້າພວກກະສັດ ພວກຜູ້ປົກຄອງແລະ ບັນພະບູລຸດຂອງພວກຂ້ານ້ອຍໄດ້ເຮັດສິ່ງທີ່ໜ້າອັບອາຍ*
*ແລະສິ່ງທີ່ເປັນບາບຕໍ່ສູ້ພຣະອົງ. 9ພຣະອົງຊົງເມດຕາແລະ ຊົງໃຫ້ອະພັຍ ແຕ່ພວກຂ້ານ້ອຍໄດ້ກະບົດຕໍ່ສູ້ພຣະອົງ. 10ຂ້າແດ່ພຣະຜູ້-*
*ເປັນເຈົ້າ ເມື່ອພຣະອົງຊົງບອກໃຫ້ພວກຂ້ານ້ອຍເຮັດຕາມພຣະບັນຍັດໂດຍຊົງບອກຜ່ານທາງພວກຜູ້ປະກາດພຣະທັມນັ້ນ ພວກຂ້າ-*
*ນ້ອຍບໍ່ໄດ້ເຊື່ອຟັງພຣະອົງ.*

- **ການກະບົດ.** ພຣະເຈົ້າໄດ້ຊົງປະທານແກ່ປະຊາກອນຂອງພຣະອົງ ໂອກາດສົມຄວນທີ່ຈະຖິ້ມໃຈເກົ່າເອົາໃຈໃໝ່. ພຣະອົງໄດ້ສົ່ງບັນດາຜູ້ປະກາດພຣະທັມມາເວົ້າກັບທຸກໆຄົນ, ຈາກລະດັບພະຣາຊາໃນພະຣາຊວັງເຖິງລະດັບຄົນຂໍທານຂ້າງຖນົນ. ເຖິງປານນັ້ນບໍ່ມີຜູ້ໃດປາຖນາຢາກຟັງ. ຜົນຮັບກໍຄື: ການຊົງຕັດສິນຂອງພຣະເຈົ້າ. ໄພ່ພົນຂອງພຣະອົງໄດ້ຖືກພັດພາກຈາກບ້ານເກີດເມືອງນອນຂອງຕົນໄປເປັນທາດຂອງກຸງບາບີໂລນ. ຊາວຢິວ, ໄດ້ຖືກເນລະເທດໄປຍັງດິນແດນອັນແສນໄກ, ເປັນຫຼັກຖານຢືນຢັນການຊົງພິພາກສາອັນຊອບທັມຂອງພຣະເຈົ້າສຳລັບຄວາມບໍ່ສັດຊື່ແລະການບໍ່ເຊື່ອຟັງຂອງພວກເຂົາເຈົ້າ.
- **ຄຳຕອບ.** ດານີເອນບໍ່ໄດ້ຈົດຈໍ່ໃສ່ແຕ່ພຽງຄວາມບາບເທົ່ານັ້ນແລະຄວາມເສັຽຫາຍຂອງມັນທີ່ຕັດຂາດສະບັ້ນຄວາມສັມພັນຂອງຜູ້

ຄືນກັບພຣະເຈົ້າ. ລາວສຸມໃສ່ຄຳບັນລະຍາຍພຣະຄຸນແລະຄວາມຊົງເຫັນອົກເຫັນໃຈຂອງພຣະເຈົ້າທີ່ໄດ້ຖອກເຫລືອງມາສູ່ປະຊາກອນຂອງພຣະອົງຢ່າງຫຼວງຫຼາຍ. ດານີເອນໄດ້ໃຊ້ຄຳເວົ້າ 3 ຄຳເພື່ອບັນລະຍາຍຫຼັກການຂອງພຣະເຈົ້າ. ນີ້ແມ່ນພື້ນຖານຂອງວິທີທີ່ພຣະເຈົ້າຊົງຕອບສນອງຕໍ່ການບໍ່ສັດຊື່ແລະການບໍ່ເຊື່ອຟັງຂອງມະນຸດ.

1. **ຄວາມຊອບທັມ.** ເນື້ອແທ້ຄວາມສຳຄັນຂອງພຣະເຈົ້າ ດານີເອນນະມັສການແລະຮັບໃຊ້ແມ່ນຄວາມຊອບທັມ. ພຣະອົງຊົງບໍຣິສຸດແລະຊອບທັມ-ແລະຊອບທັມທັງໝົດ! ນັ້ນຄື, ພຣະອົງຊົງປະຕິບັດໃນທາງທີ່ຖືກຕ້ອງ, ມີສິນທັມ, ແລະຍຸດຕິທັມ, ເຖິງແມ່ນວ່າພວກເຮົາອາດຈະບໍ່ເຂົ້າໃຈ.

2. **ຄວາມເຫັນອົກເຫັນໃຈ.** ພຣະອົງຊົງເປັນພຣະເຈົ້າທີ່ມີຄວາມເຫັນອົກເຫັນໃຈ. ພຣະຄັມພີເດີມພາສາເຮັບເຣີມີຄຳເວົ້າແຕກຕ່າງກັນຫ້າຄຳຊຶ່ງຕີຄວາມໝາຍຄຳວ່າ "ຄວາມເຫັນອົກເຫັນໃຈ" ຄຳທີ່ຢູ່ໃນພຣະຄັມພີດານີເອນ 9:9 ແມ່ນຄຳເວົ້າສຳລັບ "ມົດລູກ"("womb"). ມັນບົ່ງບອກເຖິງການກະທຳຂອງໜ່ວຍງານທີ່ມີອຳນາດຫຼາຍກວ່າ (ໃນກໍລະນີນີ້ແມ່ນພຣະເຈົ້າ) ທີ່ຊົງລ້ຽງດູແລະປົກປ້ອງຮັກສາບັນດາຜູ້ທີ່ມີຄວາມສ່ຽງຫຼືສິ້ນຫວັງ. ມັນຈັ່ງແມ່ນຄຳເວົ້າທີ່ມີອຳນາດສຳລັບດານີເອນ! ທີ່ໄດ້ໃຊ້ຫຼັງຈາກລາວແລະລູກຫຼານຂອງອິສຣາເອນທີ່ໄດ້ຖືກພາໄປເປັນຊະເລີຍ(ຂ້າທາດ). ເຖິງແມ່ນວ່າໃນການຊົງພິພາກສາຂອງພຣະອົງ, ພຣະເຈົ້າໄດ້ຊົງລ້ຽງດູແລະຊົງປົກປ້ອງສິ່ງທີ່ເປັນຂອງພຣະອົງ (ເບິ່ງ ນຫມ 9:30ຂ-31).

3. **ການອະພັຍໂທດ.** ຊາວບູຮານອື່ນໆພາກໃກ້ຕາເວັນອອກບໍ່ມີແນວຄວາມຄິດທີ່ວ່າພຣະເຈົ້າຈະຊົງໃຫ້ອະພັຍດ້ວຍຄວາມເຕັມພຣະທັຍແລະດ້ວຍພຣະກະລຸນາ. ຊາວເອຢິບເຊື່ອວ່າພະເຈົ້າຂອງພວກເພິ່ນໃຫ້ຄວາມໂປດປານທາງວິນຍານພຽງແຕ່ໃນການຕອບສນອງການຖວາຍແດ່ພະທັງຫຼາຍຂອງພວກເພິ່ນ. ຊາວສຸເມເຣັຽແລະຊາວບາບີໂລນເຊື່ອວ່າການປະຕິບັດພິທີກັມບາງຢ່າງຮວມທັງການໄລ່ຜີແມ່ນວິທີຈັດການກັບຄວາມບາບ. ບໍ່ມີພະເຈົ້າອົງໃດຂອງພວກເຂົາທີ່ຈະຕອບສນອງຕໍ່ບຸກຄົນທີ່ສາລະພາບຫຼືກັບໃຈໃໝ່ຈາກການເຮັດຜິດພາດ. ແຕ່, ພຣະເຈົ້າຊົງສເນີການຊົງໃຫ້ອະພັຍເປັນຕົວຢ່າງຂອງຄວາມຮັກອັນສັດຊື່ຂອງພຣະອົງຕໍ່ບັນດາຄົນບາບ(ພສສ 32:5).

*ດ້ວຍວ່າພຣະເຈົ້າຊົງຊອບທັມ, ຊົງເຫັນອົກເຫັນໃຈ, ແລະຊົງໃຫ້ອະພັຍເປັນຫຍັງບາງຄັ້ງພວກເຮົາຈຶ່ງຊັກຊ້າໃນການສາລະພາບບາບ?*

## 3. ດານີເອນ 9:17-19

*17 ຂ້າແດ່ພຣະຜູ້ເປັນເຈົ້າ ຕໍ່ໄປນີ້ຂໍຊົງໂຜດຮັບຟັງຄຳອ້ອນວອນຍອມສາລະພາບຜິດຂອງຂ້ານ້ອຍແດ່ທ່ານ. ຂໍຊົງໂຜດໃຫ້ພຣະວິນຍານ*
*ຂອງພຣະອົງທີ່ຖືກທຳລາຍນັ້ນກັບຄືນເປັນຄືເກົ່າເພື່ອທຸກໆຄົນຈະໄດ້ຮູ້ວ່າພຣະອົງຊົງເປັນພຣະເຈົ້າ. 18 ຂ້າແດ່ພຣະເຈົ້າຂໍຊົງຮັບຟັງສຽງ*
*ພວກຂ້ານ້ອຍແດ່ທ່ານ ຂໍຊົງດູແລແລະທອດພຣະເນດເບິ່ງຄວາມທຸກຍາກທີ່ພວກຂ້ານ້ອຍປະສົບຢູ່ພ້ອມທັງຄວາມທຸກຍາກໃນນະຄອນ*
*ຂອງພຣະອົງ ພວກຂ້ານ້ອຍອ້ອນວອນພຣະອົງຍ້ອນວ່າພຣະອົງຊົງ ພຣະເມດຕາບໍ່ແມ່ນຍ້ອນພວກຂ້ານ້ອຍເປັນຄົນຊອບທັມ. 19 ຂ້າ*
*ແດ່ພຣະຜູ້ເປັນເຈົ້າ ຂໍຊົງຮັບຟັງພວກຂ້ານ້ອຍແດ່ທ່ານ ໂອພຣະຜູ້ເປັນເຈົ້າ ຂໍຊົງຍົກໂທດໃຫ້ພວກຂ້ານ້ອຍແດ່ທ່ານ. ຂໍຊົງຮັບຟັງ*
*ພວກຂ້ານ້ອຍ ແລ້ວຊົງຮີບກະທຳເພື່ອໃຫ້ທຸກໆຄົນຮູ້ຈັກວ່າພຣະອົງຊົງເປັນພຣະເຈົ້າ. ຂໍຢ່າຊົງລໍຊ້າຢູ່ເພາະວ່ານະຄອນແລະປະຊາຊົນ*
*ນີ້ເປັນຂອງພຣະອົງ."*

ດານີເອນໄດ້ເລີ້ມການອ້ອນວອນອະທິຖານຂອງເພິ່ນດ້ວຍການສະແດງຄວາມຖ່ອມໃຈ, ໂດຍການຊີ້ແຈງວ່າເພິ່ນກຳລັງກ່າວເຖິງ "ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ"-ພຣະເຈົ້າຜູ້ຊົງຍິ່ງໃຫຍ່ແລະເປັນໜ້າຢ້ານກົວ (9:4). ເພິ່ນໄດ້ເຂົ້າໄປໃກ້ຈຸດຈົບຂອງການອະທິຖານໂດຍເນັ້ນໜັກເຖິງຊັບສິນທີ່ຕ່ຳຕ້ອຍຂອງລາວ.

- **ຄວາມຖ່ອມຕົວຂອງພວກເຮົາ.** ດັ່ງດຽວກັບດານີເອນ, ພວກເຮົາສົມຄວນທີ່ຈະເຂົ້າໃກ້ພຣະເຈົ້າດ້ວຍນິສັຍໃຈຄໍທີ່ຖ່ອມໃຈເທົ່ານັ້ນ. ພຣະຄັມພີສອນພວກເຮົາວ່າ: "ພຣະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງແຕ່ຊົງປະທານພຣະຄຸນແກ່ຄົນທີ່ຖ່ອມໃຈລົງ." (ຢກບ 4:6). ຍິ່ງໄປກວ່ານັ້ນ, ພຣະເຈົ້າຊົງຮຽກຮອ້ງໃຫ້ພວກເຮົາ "ເຮັດສິ່ງທີ່ຖືກຕ້ອງ, ສະແດງຄວາມຮັກອັນໝັ້ນຄົງ, ແລະໃຊ້ຊີວິດໃນຄວາມສາມັກຄີທັມກັບພຣະເຈົ້າຂອງພວກເຮົາດ້ວຍຄວາມຖ່ອມໃຈ." (ມີກາ 6:8).

- **ກຽດສັກສີຂອງພຣະເຈົ້າ.** ດານີເອນໄດ້ເລື່ອນກາຍເໜືອຄວາມກັງວົນຂອງຕົນສຳລັບ "ປະຊາຊົນຜູ້ຢູ່ໃນແຂວງຢູດາໃນນະຄອນເຢຣູຊາເລັມແລະຊາວອິສຣາເອນທັງໝົດ" (ດນອ 9:7). ລາວຢາກມີຄວາມແນ່ໃຈວ່າພຣະນາມຂອງພຣະເຈົ້າຊົງໄດ້ຮັບພຣະກຽດ. ດານີເອນໄດ້ອະທິຖານສຳລັບພຣະເຈົ້າເພື່ອຟື້ນຟູທັງສອງຢ່າງຄື ສະຖານທີ່ສັກສິດອັນຮົກຮ້າງຂອງພຣະອົງແລະເມືອງທີ່ມີພຣະນາມຂອງພຣະອົງ. ດານີເອນມີຄວາມເປັນຫ່ວງກ່ຽວກັບສະພາບການຮ້າຍແຮງຂອງເມືອງແລະພຣະວິຫານ, ແລະພ້ອມກັບເປັນຫ່ວງເປັນໄຍກ່ຽວກັບປະຊາຊົນນຳອີກ.

ຄວາມເຂົ້າໃຈຂອງດານີເອນແມ່ນວ່າສະພາບທີ່ຫຍຸ້ງຍາກຂອງສະຖານທີ່ແລະປະຊາຊົນຈະສະທ້ອນເຖິງພຣະລັກສະນະຂອງພຣະເຈົ້າທີ່ບໍ່ດີໃນສາຍຕາຂອງບັນດາຜູ້ທີ່ບໍ່ເຊື່ອແລະມັກລະແວງສົງສັຍທີ່ບໍ່ເຊື່ອພຣະເຈົ້າ. ດັ່ງນັ້ນ, ເພິ່ນຈຶ່ງໄດ້ອະທິຖານຂໍພຣະເຈົ້າໃຫ້ຊົງປະຕິບັດໃນນາມຂອງພຣະວິຫານ, ເມືອງ, ແລະຜູ້ຄົນ-ເພື່ອເຫັນແກ່ພຣະນາມຂອງພຣະອົງ. ນີ້ແມ່ນຄຳອະທິຖານຂອງຄົນຂອງພຣະເຈົ້າແທ້ໆ. ເຖິງແມ່ນວ່າຈະມີສະພາບການແລະຄວາມທຸກທໍລະມານຂອງຕົນເອງກໍຕາມ, ຄວາມສົນໃຈຂອງເພິ່ນໄດ້ສຸມໃສ່ສິ່ງທີ່ຄົນອື່ນຈະຄິດກ່ຽວກັບພຣະເຈົ້າທີ່ລາວນະມັສການແລະຮັກ. ລາວໄດ້ເປັນຫ່ວງເປັນໄຍກ່ຽວກັບຊື່ສຽງຂອງພຣະຜູ້ເປັນເຈົ້າ.

*ການສາລະພາບມີຜົນກະທົບແນວໃດຕໍ່ຊຸມຊົນຂອງພວກເຮົາ?*

ບ່ອນນີ້ມາເຖິງຄຳສລຸບຂອງການອະທິຖານຂອງດານີເອນ, ລາວໄດ້ອ້ອນວອນພຣະເຈົ້າໃຫ້ຊົງອະພັຍໂທດບາບ. ໃນຮູບແບບເກືອບຢຸດນິ້ງຢູ່, ລາວໄດ້ອ້ອນວອນຕໍ່ພຣະເຈົ້າໃຫ້ຊົງໄດ້ຍິນ, ຊົງຮັບຟັງ, ຊົງໃຫ້ອະພັຍ, ແລະຊົງປະຕິບັດ. ດານີເອນໄດ້ອະທິຖານຢ່າງເຊື່ອໃຈວ່າພຣະເຈົ້າຈະຊົງກະທຳ, ແລະຫວັງວ່າພຣະອົງຈະຊົງປະຕິບັດໂດຍປາສຈາກການລ່າຊ້າ. ພວກເຮົາສາມາດມີຄວາມແນ່ໃຈດັ່ງດຽວກັນ. ພຣະເຈົ້າຊົງໄດ້ຍິນເມື່ອພວກເຮົາຮຽກຮ້ອງທູນຂໍຕໍ່ພຣະອົງ. ພວກເຮົາມີພຣະເຈົ້າຜູ້ຊົງໄດ້ຍິນແລະຊົງຕອບຄຳອະທິຖານ. ພຣະອົງຊົງເປັນພຣະເຈົ້າອົງຊົງຍິ່ງໃຫຍ່ແລະຊົງເປັນພຣະເຈົ້າທີ່ໜ້າຢຳເກງ!

## ນຳໃຊ້ໃນຊີວິດ

ການສາລະພາບແລະການຖິ້ມໃຈເກົ່າເອົາໃຈໃໝ່ເຮັດໃຫ້ພວກເຮົາຢູ່ໃກ້ພຣະເຈົ້າ. ຈົ່ງໃຊ້ນິ້ງໃນການນຳໃຊ້ຕໍ່ລົງໄປນີ້:

➢ **ຊື່ນຊົມຍິນດີ.** ໃນຂະນະທີ່ທ່ານໃຊ້ເວລາກັບພຣະເຈົ້າໃນອາທິດນີ້, ຈົ່ງລວບລວມບັນຊີລາຍຊື່ທີ່ເປັນລາຍລັກອັກສອນຂອງຄຸນລັກສະນະທີ່ສະແດງໃຫ້ເຫັນວ່າພຣະເຈົ້າຊົງຍິ່ງໃຫຍ່ແລະເປັນທີ່ຢຳເກງ. ຈົ່ງເພີ້ມເຕີມໃສ່ບັນຊີລາຍຊື່ນັ້ນແຕ່ລະມື້. ຈາກນັ້ນຈົ່ງຢືນຢັນຄຸນລັກສະນະເຫຼົ່ານີ້ຕໍ່ພຣະອົງໃນການວິງວອນອະທິຖານ. ໃຫ້ສິ່ງເຫຼົ່ານີ້ເປັນເຄື່ອງຖວາຍຂອງທ່ານເພື່ອສັຣເສີນພຣະເຈົ້າ.

➢ **ກັບໃຈໃໝ່.** ຈົ່ງທູນຂໍພຣະເຈົ້າໃຫ້ພຣະອົງຊົງສະແດງໃຫ້ທ່ານໄດ້ເຫັນວ່າຄວາມບາບໄດ້ຄືບຄານເຂົ້າມາໃນຊີວິດຂອງທ່ານຈາກໃສ, ບ່ອນໃດທີ່ທ່ານບົກພ່ອງທີ່ທ່ານຄວນຈະຢູ່ຫຼືຈະທຳ? ຈົ່ງສາລະພາບບາບເຫຼົ່ານັ້ນຕໍ່ພຣະເຈົ້າແລະຂໍການຍົກໂທດຂອງພຣະອົງ.

➢ **ກໍ່ຕັ້ງຂຶ້ນໃໝ່.** ຖ້າວ່າມີບ່ອນໃດທີ່ຄວາມບາບຂອງທ່ານມີຜົນກະທົບໃນທາງລົບຕໍ່ຄວາມສັມພັນຂອງທ່ານກັບຄົນອື່ນ, ຈົ່ງສາລະພາບຄວາມບາບເຫຼົ່ານັ້ນຕໍ່ພວກເຂົາເຈົ້າ ແລະຂໍອະພັຍໂທດຈາກພວກເພິ່ນ. ຈົ່ງອະທິບາຍວ່າພຣະເຈົ້າຊົງກຳລັງທຳງານໃນຊີວິດຂອງທ່ານແລະດ້ວຍເຫດນີ້, ທ່ານມີຄວາມປາຖນາເຮັດໃຫ້ຖືກຕ້ອງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**